**ສານເມືອງ ສໍາລັບບັນດາເມືອງທາງພາກເໜືອຂອງລັດຄາລິຟໍເນຍ ສະຫະລັດອາເມລິກາ**

***Louangamath v. The Spectranetics Corporation d.b.a. SPNC, Inc., a Delaware Corporation***

**ເລກໝາຍເລກ. 4:18-cv-03634-JST**

# <u>ແຈ້ງການກ່ຽວກັບການດໍາເນີນຄະດີ</u>

*ສານໄດ້ຮັບການອະນຸມັດໃຫ້ອອກແຈ້ງການນີ້. ນີ້ບໍ່ແມ່ນການຊັກຊວນ.*
*ນີ້ບໍ່ແມ່ນຄະດີຄວາມທີ່ມີກັບທ່ານ ແລະ ທ່ານກໍບໍ່ໄດ້ຖືກຮ້ອງຟ້ອງ.*
*ເຖິງຢ່າງໃດກໍຕາມ, ສິດຕາມກົດໝາຍຂອງທ່ານແມ່ນຈະໄດ້ຮັບຜົນກະທົບ, ບໍ່ວ່າທ່ານຈະໄດ້ກະທໍາ ຫຼື ບໍ່ກໍຕາມ.*

| |
|---|
| ການດໍາເນີນຄະດີຈະມີຜົນກະທົບຕໍ່ສິດຂອງທ່ານ ຖ້າທ່ານເຮັດວຽກໃຫ້ກັບບໍລິສັດ Spectranetics Corporation ໃນເມືອງຟຣີມອນ (Fremont), ລັດແຄລິຟໍເນຍ ໃນບາງຊ່ວງ ຫຼື ຕະຫຼອດໄລຍະນັບແຕ່ 20 ເມສາ 2014 ຫາ 17 ສິງຫາ 2022. |

- ພະນັກງານຊື່ Shelly Louangamath ("ເປັນຕົວແທນຂອງຄະດີ" ຫຼື "ເຈົ້າທຸກ") ຮ້ອງຟ້ອງ Spectranetics Corporation ("Spectranetics" ຫຼື "ຈໍາເລີຍ") ໃນຖານະທີ່ເປັນຕົວແທນໃຫ້ແກ່ຕົວລາວເອງ ແລະ ພະນັກງານທີ່ເຮັດວຽກເປັນຊົ່ວໂມງທີ່ບໍ່ໄດ້ຮັບການຍົກເວັ້ນ ທີ່ເຮັດວຽກຢູ່ໃນ (Fremont North) ຫຼື (Fremont South) ເປັນຜູ້ປະກອບການໃນສິ່ງອໍານວຍຄວາມສະດວກ ຫຼື ທຽບເທົ່າຂອງ Spectranetics Corporation d.b.a. SPNC, Inc., ແລະ ບໍລິສັດລຸ້ນກ່ອນ ແລະ ໄດ້ກ່າວຫາວ່າຈໍາເລີຍລະເມີດກົດໝາຍແຮງງານຂອງລັດຖະບານຄາລິຟໍເນຍ, ກົດໝາຍແຂ່ງຂັນທີ່ບໍ່ເປັນທໍາຂອງລັດຄາລິຟໍເນຍ ແລະ ບາງມີສິດທີ່ຈະຮຽກຄືນບົດລົງໂທດທາງແພ່ງພາຍໃຕ້ກົດໝາຍແຮງງານຂອງລັດຄາລິຟໍເນຍຂອງປີ 2004 ("PAGA").
- ການຮຽກຮ້ອງສິດຂອງຕົວແທນຄະດີ ແລະ ການດໍາເນີນຄະດີໄດ້ຮັບການແກ້ໄຂແລ້ວ. ສານໄດ້ອະນຸມັດການດໍາເນີນຄະດີໃນເບື້ອງຕົ້ນແລ້ວ.
- ຖ້າທ່ານເໝາະສົມໃນຖານະເປັນສະມາຊິກຂອງການດໍາເນີນຄະດີ, ທ່ານຈະໄດ້ຮັບເງິນຈາກການແກ້ໄຂຄະດີນັ້ນ.
- ສິດທາງດ້ານກົດໝາຍຂອງທ່ານຈະມີຜົນບໍ່ວ່າທ່ານຈະກະທໍາ ຫຼື ບໍ່ກະທໍາກໍຕາມ. ອ່ານແຈ້ງການນີ້ຢ່າງລະອຽດ.
- **ທ່ານບໍ່ໄດ້ຖືກຟ້ອງ**. ຈໍາເລີຍຟ້ອງ Spectranetics ໃນການດໍາເນີນຄະດີ ໃນນາມຂອງຕົວລາວເອງ ແລະ ພະນັກງານທີ່ມີລັກສະນະຄ້າຍກັບທ່ານ.

**ສິດທາງດ້ານກົດໝາຍຂອງທ່ານ ແລະ ທາງເລືອກຂອງການລະງັບຂໍ້ພິພາດນີ້ແມ່ນຫຍັງ?**

| | |
|---|---|
| **ບໍ່ໄດ້ເຮັດຫຍັງ** | ຖ້າທ່ານບໍ່ໄດ້ເຮັດຫຍັງ (ນັ້ນໝາຍເຖິງ, ຖ້າທ່ານບໍ່ໄດ້ຍື່ນຄໍາສະເໜີຂໍຍົກເວັ້ນໃນເວລາທີ່ເໝາະສົມ), ທ່ານຈະໄດ້ຮັບການຊໍາລະຈາກການລະງັບຂໍ້ພິພາດ.<br>ໃນການຍົກເວັ້ນສໍາລັບການຊໍາລະນີ້,<br>ທ່ານຈະຕ້ອງຍອມແພ້ຕໍ່ສິດໃດໆທີ່ໄດ້ມີການຮ້ອງຟ້ອງສໍາລັບການຮຽກ ຮ້ອງສິດຄືກັນ ຊຶ່ງເປັນສ່ວນໜຶ່ງຂອງການລະງັບຂໍ້ພິພາດນີ້. |
| **ຍົກເວັ້ນຕົວທ່ານເອງ**<br>**ວັນໝົດອາຍຸ:**<br>**14 ພະຈິກ 2022** | ຍອມແພ້ຕໍ່ຜົນປະໂຫຍດທັງໝົດ, ລວມທັງເງິນຈາກການລະງັບຂໍ້ພິພາດ. ຮັກສາສິດທັງໝົດທີ່ທ່ານອາດຈະໄດ້ຮັບຕໍ່ Spectranetics, ຊຶ່ງອະທິບາຍໄວ້ຂ້າງລຸ່ມນີ້. |
| **ການຄັດຄ້ານ**<br>**ວັນໝົດອາຍຸ:**<br>**14 ພະຈິກ 2022** | ຂຽນໜັງສືຫາສານວ່າເປັນຫຍັງທ່ານຈຶ່ງບໍ່ເຫັນດີກັບການລະງັບຂໍ້ພິພາດນີ້.<br>ສານອາດຈະເຫັນດີ ຫຼື ບໍ່ເຫັນດີຕໍ່ການຄັດຄ້ານຂອງທ່ານ.<br>ຖ້າສານອະນຸມັດການລະງັບຂໍ້ພິພາດ, ທ່ານຈະໄດ້ຮັບການຊໍາລະຈາກການລະງັບຂໍ້ພິພາດ ແລະ ທ່ານຈະໄດ້ຮັບການຜູກມັດດ້ວຍເງື່ອນໄຂຂອງຂໍ້ຕົກລົງ ແລະ ລາຍລະອຽດການປ່ອຍຕົວໃນແຈ້ງການສະບັບນີ້. |

| | |
|---|---|
| **ຂ້າພະເຈົ້າຈະໄດ້ຮັບເປັນມູນຄ່າເທົ່າໃດ?** | ອີງຕາມບົດບັນທຶກຂອງ Spectranetics, ການຊໍາລະຄ່າລະງັບຂໍ້ພິພາດສ່ວນບຸກຄົນຄາດຄະເນຈະເປັນຈໍານວນເງິນ<<$EstAmount>>. ນີ້ແມ່ນອີງຕາມຈໍານວນອາທິດຂອງການເຮັດວຽກທີ່ເໝາະສົມທັງໝົດຂອງທ່ານ:<<WorkWeeks>>. |

- ສິດ ແລະ ທາງເລືອກຂອງທ່ານ – ແລະ ວັນທີທີ່ໝົດອາຍຸເພື່ອໃຫ້ພວກເຂົາເຮັດວຽກ – ແມ່ນໄດ້ອະທິບາຍຢູ່ໃນແຈ້ງການສະບັບນີ້.
- ສານຮັບຜິດຊອບໃນຄະດີນີ້ຍັງຄົງຕ້ອງຕັດສິນໃຈວ່າຈະໃຫ້ການອະນຸມັດຂັ້ນສຸດທ້າຍໃນການລະງັບຄະດີ ຫຼືບໍ່. ການຊໍາລະຈະຖືກປະຕິບັດ ຖ້າສານອະນຸມັດການລະງັບຄະດີ ແລະ ຫຼັງຈາກການອຸທອນໃດໆໄດ້ຮັບການແກ້ໄຂໄປຍັງສະມາຊິກດໍາເນີນຄະດີ ຜູ້ທີ່ບໍ່ເລືອກທີ່ຈະຖອດຖອນອອກຈາກຄະດີນີ້.

## ເປັນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບແຈ້ງການນີ້?

ຂໍ້ຕົກລົງຈະຕ້ອງສົ່ງຫາຜູ້ທີ່ມີສິດໃນຄະດີ ***Louangamath v. The Spectranetics Corporation, et al.***, ໝາຍເລກຄະດີ. 4:18-cv-03634-JST, ຊຶ່ງແມ່ນກໍາລັງດໍາເນີນການຢູ່ໃນສານເມືອງຂອງສະຫະລັດອາເມລິກາ ຊຶ່ງຢູ່ທາງພາກເໜືອຂອງຄາລິຟໍເນຍ ("ການກະທໍາ" ຫຼື "ຄະດີຄວາມ"). The Honorable Jon S. Tigar ເປັນປະທານໃນຄະດີນີ້. ການດໍາເນີນຄະດີໄດ້ສິ້ນສຸດໃນນາມຂອງ "ຄະດີ" ທີ່ສະເໜີເປັນ: ທຸກໆການຈ່າຍເງິນຊົ່ວໂມງທັງໝົດໃນປະຈຸບັນ ແລະ ຜ່ານມາ, ພະນັກງານທີ່ບໍ່ໄດ້ຮັບການຍົກເວັ້ນທີ່ເຮັດວຽກໃນ Fremont North ຫຼື Fremont South ໂດຍ THE SPECTRANETICS CORPORATION ຫຼື ບໍລິສັດລຸ້ນກ່ອນໃນຖານະພະນັກງານລາຍຊົ່ວໂມງທີ່ບໍ່ໄດ້ຮັບການຍົກເວັ້ນຊຶ່ງເຮັດວຽກເປັນ assemblers ຫຼືຕໍາແໜ່ງທີ່ທຽບເທົ່າກັນ ໃນເວລາໃດກໍໄດ້ໃນໄລຍະເວລານັບຕັ້ງແຕ່ ວັນທີ 20 ເມສາ 2014 ຈົນເຖິງ ວັນທີ 17 ສິງຫາ 2022. ("ໄລຍະຂອງຄະດີ").

ທ່ານໄດ້ຮັບແຈ້ງການນີ້ເນື່ອງຈາກວ່າບົດບັນທຶກຂອງ Spectranetics ທີ່ລະບຸວ່າທ່ານແມ່ນສະມາຊິກຂອງຄະດີທີ່ລະບຸໄວ້ຢູ່ຂ້າງເທິງນັ້ນ ("ສະມາຊິກຄະດີ"). ທ່ານໄດ້ຮັບແຈ້ງການນີ້ເນື່ອງຈາກວ່າທ່ານມີສິດທີ່ຈະຮູ້ກ່ຽວກັບການແກ້ໄຂຢູ່ໃນການດໍາເນີນຄະດີ ແລະ ກ່ຽວກັບທາງເລືອກຂອງທ່ານກ່ອນທີ່ສານຈະພິຈາລະນາໄດ້ຮັບການພິຈາລະນາແກ້ໄຂຄັ້ງສຸດທ້າຍ. ຖ້າສານອະນຸມັດ ແລະ ຫຼັງຈາກທີ່ການຄັດຄ້ານໄດ້ຖືກຕັດສິນ ແລະ ພິຈາລະນາ, ຜູ້ດູແລຂໍ້ຕົກລົງໄດ້ຖືກແຕ່ງຕັ້ງໂດຍສານຈະເຮັດການຊໍາລະເງິນໃຫ້ຊຶ່ງໄດ້ຮັບອະນຸຍາດຈາກຂໍ້ຕົກລົງ.

ແຈ້ງການສະບັບນີ້ໄດ້ອະທິບາຍຄະດີ, ຂໍ້ຕົກລົງ, ສິດຕາມກົດໝາຍຂອງທ່ານ, ຜົນປະໂຫຍດຫຍັງທີ່ມີໃຫ້, ຜູ້ທີ່ມີສິດສໍາລັບພວກເຂົາ ແລະ ຈະຮັບພວກເຂົາໄດ້ແນວໃດ.

## ຄະດີຄວາມນີ້ແມ່ນກ່ຽວກັບຫຍັງ?

Shelly Louangamath ທີ່ເປັນໂຈດນັ້ນ, ໄດ້ຍື່ນຟ້ອງຄະດີຕາມການສະເໜີ ແລະ ເປັນຕົວແທນຟ້ອງຮ້ອງດໍາເນີນຄະດີໃນວັນທີ 20 ເມສາ 2018, ໃນນາມຂອງຕົວເອງ ແລະ ພະນັກງານທັງໝົດທີ່ບໍ່ໄດ້ຮັບການຍົກເວັ້ນຄ່າຈ້າງລາຍຊົ່ວໂມງທີ່ເຮັດວຽກໃຫ້ກັບນາຍຈ້າງ Fremont North ຫຼື Fremont South ໃນຄາລິຟໍເນຍ ໃນໄລຍະເລີ່ມຕົ້ນ ວັນທີ 20 ເມສາ 2014 ຈົນເຖິງປັດຈຸບັນໃນຜູ້ປະກອບ ຫຼື ຕໍາແໜ່ງທີ່ທຽບເທົ່າ, ໃນຄະດີທີ່ອອກຊື່ ***Louangamath v. The Spectranetics Corporation, et al.*** ການຮ້ອງຮຽນກ່າວຫາເຈັດຄະດີຂອງການດໍາເນີນການກັບຈໍາເລີຍ Spectranetics: (1) ການລະເມີດການຊໍາລະເງິນຄືນ; (2) ການລະເມີດຊົ່ວໂມງພັກກິນເຂົ້າ; (3) ການລະເມີດຊົ່ວໂມງພັກຜ່ອນ; (4) ການປະຕິເສດທີ່ຈະຈ່າຍເງິນຄ່າລ່ວງເວລາ ແລະ ຄ່າແຮງງານປົກກະຕິ; (5) ການລະເມີດຂໍ້ຕົກລົງຄ່າແຮງງານ; (6) ການດໍາເນີນທຸລະກິດທີ່ບໍ່ຍຸດຕິທໍາ; ແລະ (7) ການລົງໂທດທາງແພ່ງພາຍໃຕ້ກົດໝາຍໄອຍະການສູງສຸດຂອງລັດຄາລິຟໍເນຍ.

## ຂ້າພະເຈົ້າຕ້ອງມີທະນາຍຄວາມບໍ?

**ທ່ານບໍ່ຈຳເປັນທີ່ຈະຕ້ອງຈ້າງທະນາຍຄວາມດ້ວຍຕົວເອງ**. ທ່ານໄດ້ຮັບຕົວແທນຈາກທີ່ປຶກສາຄະດີແລ້ວ (ເບິ່ງຂໍ້ມູນຕິດຕໍ່ຂອງພວກເຂົາໄດ້ຂ້າງລຸ່ມນີ້). ເຖິງຢ່າງໃດກໍຕາມ, ທ່ານອາດຈະຈ້າງທະນາຍຄວາມຂອງທ່ານເອງດ້ວຍເງິນສ່ວນຕົວຂອງທ່ານ ຖ້າທ່ານເລືອກທີ່ຈະເຮັດແບບນັ້ນ.

## ສະຖານະຂອງຄະດີແມ່ນຫຍັງ?

Spectranetics ປະຕິເສດທຸກຂໍ້ກ່າວຫາທັງໝົດຂອງໂຈດໃນຄະດີ, ຫຼືວ່າລະເມີດກົດໝາຍໃດໆ ແລະ ຢືນຢັນວ່າເປັນໄປຕາມກົດໝາຍຂອງລັດຖະບານກາງ, ຂອງລັດ ແລະ ທ້ອງຖິ່ນຕະຫຼອດເວລາ. ຂໍ້ຕົກລົງນີ້ບໍ່ໄດ້ແມ່ນການຍອມຮັບໂດຍ Spectranetics ຕໍ່ການກະທຳຜິດ ຫຼື ການຊີ້ບອກວ່າກົດໝາຍໃດໆນັ້ນໄດ້ຖືກລະເມີດ.

ສານບໍ່ໄດ້ພິຈາລະນາເຫັນດີກັບ ໂຈດ ຫຼື ຈຳເລີຍ ຫຼື ບໍ່ໄດ້ພິຈາລະນາວ່າກໍລະນີນີ້ຄວນຈະດຳເນີນການໃນນາມຂອງຄະດີ ຫຼື ຕົວແທນໃນການດຳເນີນການ.

ແທນທີ່ຈະຕ້ອງຜ່ານການຮັບຮອງຄະດີ ຫຼື ການພິຈາລະນາຄະດີ, ຫຼັງຈາກການກວດສອບຂໍ້ເທັດຈິງຂອງຄະດີນີ້ຢ່າງລະອຽດແລ້ວ, ທັງສອງຝ່າຍໄດ້ຕົກລົງທີ່ຈະຍຸດຕິຂໍ້ຕົກລົງທີ່ຈະບໍ່ມີຂໍ້ພິພາດ ຫຼັງຈາກການໄກ່ເກ່ຍໂດຍໃຊ້ຜູ້ໄກ່ເກ່ຍທີ່ເປັນບຸກຄົນທີສາມທີ່ເປັນກາງ. ການຮ້ອງຮຽນຄະດີໄດ້ຖືກດຳເນີນການເນື່ອງຈາກທີ່ປຶກສາຄະດີ ແລະ ຕົວແທນຄະດີເຊື່ອວ່າເງື່ອນໄຂຂອງການດຳເນີນຄະດີ, ຊຶ່ງລວມເຖິງຜົນປະໂຫຍດທາງດ້ານການເງິນທີ່ເປັນທຳ ແລະ ສົມເຫດສົມຜົນໂດຍພິຈາລະນາຈາກຈຸດແຂງ ແລະ ຈຸດອ່ອນຂອງຂໍ້ຮຽກຮ້ອງ ແລະ ປັດໄຈອື່ນໆ.

## ແມ່ນໃຜຢູ່ໃນຄະດີ?

ທ່ານເປັນສ່ວນໜຶ່ງຂອງການດຳເນີນຄະດີ ຖ້າວ່າແມ່ນເປັນ "ສະມາຊິກການດຳເນີນຄະດີ." ຄະດີລວມມີພະນັກງານທັງໝົດ ທັງອາດີດ ແລະ ປັດຈຸບັນທີ່ບໍ່ໄດ້ຮັບການຍົກເວັ້ນຄ່າແຮງງານຄິດເປັນຊົ່ວໂມງ ທີ່ເຮັດວຽກໃຫ້ກັບ Spectranetics ໃນນາມເປັນສ່ວນໜຶ່ງ ຫຼື ຕຳແໜ່ງທີ່ທຽບເທົ່າທີ່ໂຮງງານ Fremont North ຫຼື Fremont South ໃນຄາລິຟໍເນຍ ໄດ້ຕະຫຼອດເວລາໃນໄລຍະນັບແຕ່ວັນທີ 20 ເມສາ 2014 ຈົນເຖິງ ວັນທີ 17 ສິງຫາ 2022. ການແກ້ໄຂຄະດີ **ບໍ່** ລວມສະມາຊິກຄະດີທີ່ຍື່ນທັນເວລາ ແລະ ຄຳຂໍທີ່ຖືກຕ້ອງສຳລັບການຍົກເວັ້ນ.

## ເງື່ອນໄຂຂອງການດຳເນີນຄະດີແມ່ນຫຍັງ?

ພາຍໃຕ້ແກ້ໄຂຂໍ້ພິພາດ, ເພື່ອແລກປ່ຽນກັບການປົດປ່ອຍການອ້າງສິດຕໍ່ກັບມັນ ແລະ ການຕັດສິນຄັ້ງສຸດທ້າຍໃນຄະດີຄວາມ, ຈຳເລີຍຈະຕ້ອງຈ່າຍເງິນ $350,000.00 (ອີງຕາມຈຳນວນ "ມູນຄ່າການແກ້ໄຂຄະດີສູງສຸດ"), ຊຶ່ງລວມທັງລາຍຈ່າຍທັງໝົດທີ່ໄດ້ພິຈາລະນາຈາກຂໍ້ຕົກລົງໃນການແກ້ໄຂຄະດີ, ລວມທັງການຊຳລະທັງໝົດໃຫ້ແກ່ສະມາຊິກດຳເນີນຄະດີ, ລາງວັນການບໍລິການໃຫ້ແກ່ຈຳເລີຍ, ບັນດາຄ່າໃຊ້ຈ່າຍ ແລະ ຄ່າທຳນຽມທີ່ປຶກສາທະນາຍຄວາມຄະດີ, ຕົວແທນການພັດທະນາແຮງງານ ແລະ ການດຳເນີນການຂອງຄາລິຟໍເນຍ ("LWDA") ສຳລັບການດຳເນີນການຂອງການຮຽກຮ້ອງສິດ PAGA, ອາກອນເງິນເດືອນຂອງລູກຈ້າງ ແລະ ນາຍຈ້າງ ແລະ ຄ່າໃຊ້ຈ່າຍຂອງການດຳເນີນການຄະດີ. ມູນຄ່າຂອງຂໍ້ຕົກລົງສຸດທິແມ່ນມູນຄ່າທີ່ລະບຸຫຼັງຈາກທີ່ຫັກຄ່າໃຊ້ຈ່າຍອື່ນໆ ແລະ ຄ່າທຳນຽມຂອງທີ່ປຶກສາທະນາຍຄວາມຄະດີ, ລາງວັນການໃຫ້ບໍລິການໃຫ້ແກ່ຈຳເລີຍ, ການຊຳລະ PAGA, ແລະ ລາຍຈ່າຍການດຳເນີນການຂໍ້ຕົກລົງ, ຊຶ່ງຈະຖືກກະຈາຍໃຫ້ກັບສະມາຊິກດຳເນີນຄະດີທີ່ບໍ່ໄດ້ຖອນໂຕ.

ຂຶ້ນຢູ່ກັບການອະນຸມັດຂອງສານ, ມູນຄ່າຂໍ້ຕົກລົງສູງສຸດຈະຖືກຈັດສັນດັ່ງຕໍ່ໄປນີ້.

- ການຊຳລະຄ່າລະງັບຂໍ້ພິພາດສ່ວນບຸກຄົນ: ສະມາຊິກດຳເນີນຄະດີຜູ້ທີ່ບໍ່ໄດ້ຖອດຖອນແມ່ນມີສິດທີ່ຈະໄດ້ຮັບເງິນຂອງມູນຄ່າການດຳເນີນຄະດີສຸດທິໃນຖານະເປັນການຊຳລະການລະງັບຂໍ້ພິພາດສ່ວນບຸກຄົນ, ຊຶ່ງໄດ້ຖືກຄິດໄລ່ມີລາຍລະອຽດຂ້າງລຸ່ມນີ້. ມູນຄ່າຕາມຂໍ້ຕົກລົງສຸດທິດແມ່ນຄາດຄະເນວ່າຈະໄດ້ຮັບເປັນຈຳນວນເງິນ $176,333.33. ການຄາດຄະເນຂອງການຊຳລະການລະງັບຂໍ້ພິພາດຂອງທ່ານຈາກມູນຄ່າທີ່ຕົກລົງສຸດທິ ຊຶ່ງລາຍການຢູ່ໃນໜ້າທີໜຶ່ງ.

- ລາງວັນການບໍລິການຕົວແທນຄະດີ: ຈໍາເລີຍຈະຍື່ນຕໍ່ສານສໍາລັບຄ່າບໍລິການໃນມູນຄ່າ $15,000 ໃນການຮັບຮູ້ເຖິງຄວາມພະຍາຍາມ ແລະ ຄວາມສ່ຽງຂອງທ່ານນາງໃນການໃຫ້ຄວາມຊ່ວຍເຫຼືອໃນການດໍາເນີນຄະດີໃນຄະດີຄວາມ ແລະ ເພື່ອເປັນການຕອບແທນການດໍາເນີນການຕາມຄໍາຮ້ອງທົ່ວໄປຂອງຈໍາເລີຍທັງໝົດ. ລາງວັນການບໍລິການຈໍາເລີຍຈະຖືກຈ່າຍໃຫ້ໂດຍມູນຄ່າສູງສຸດຂອງການລະງັບຂໍ້ພິພາດ, ນອກຈາກນັ້ນການຊໍາລະຄ່າຂອງການລະງັບຂໍ້ພິພາດສ່ວນບຸກຄົນໃດກໍຕາມທີ່ທ່ານນາງໄດ້ຮັບໃນນາມສະມາຊິກການດໍາເນີນຄະດີ ແລະ ມູນຄ່າທີ່ບໍ່ແມ່ນລາງວັນໃດໆໂດຍສານຈະຖືກສົ່ງຄືນມູນຄ່າການດໍາເນີນການສູງສຸດເພື່ອແຈກຢາຍໃຫ້ກັບສະມາຊິກການດໍາເນີນຄະດີ.

- ລາງວັນທີ່ປຶກສາຄະດີ: ທີ່ປຶກສາຄະດີຈະສະເໜີໃຫ້ສານອະນຸມັດ 33% ຂອງມູນຄ່າສູງສູດຂອງການລະງັບຂໍ້ພິພາດ($116,666.67 ຂອງ $350,000.00) ເປັນຄ່າທໍານຽມຂອງທະນາຍຄວາມ ສໍາລັບການດໍາເນີນຄະດີ ແລະ ການແກ້ໄຂບັນຫາຂອງຄະດີນີ້ ແລະ ຕົ້ນທຶນ ແລະ ຄ່າໃຊ້ຈ່າຍຕົວຈິງ (ບໍ່ເກີນ $15,000.00), ເປັນການຊ່ວຍເຫຼືອໂດຍການຖະແຫຼງການ. ຈໍານວນນີ້ຈະຖືກຈ່າຍໃນຈໍານວນມູນຄ່າຕໍ່າສຸດຂອງການລະງັບຂໍ້ພິພາດ ແລະ ມູນຄ່າໃດກໍຕາມທີ່ບໍ່ໄດ້ຮັບລາງວັນຈະຖືກປ່ຽນກັບໄປເປັນມູນຄ່າຂອງການລະງັບຂໍ້ພິພາດສຸດທິເພື່ອເປັນການແຈກຢາຍ.

- ການຊໍາລະ PAGA: $10,000 ຂອງການລະງັບຂໍ້ພິພາດສູງສຸດແມ່ນຈະຖືກຈັດສັນສໍາລັບການດໍາເນີນການຮຽກຮ້ອງສິດພາຍໃຕ້ກົດໝາຍແຮງງານໄອຍະການສູງສຸດຂອງປີ 2004. ຈາກການຈັດສັນນັ້ນ, 75% ($7,500) ຈະຖືກຈ່າຍໃຫ້ກັບຕົວແທນການພັດທະນາແຮງງານ ແລະ ປະຕິບັດການລັດຄາລິຟໍເນຍ, ແລະ 25% ($2,500) ຈະຖືກແຈກຈ່າຍໃຫ້ກັບສະມາຊິກການດໍາເນີນຄະດີຊຶ່ງເປັນສ່ວນໜຶ່ງຂອງຈໍານວນການລະງັບຂໍ້ພິພາດສຸດທິ.

- ການດໍາເນີນການການລະງັບຂໍ້ພິພາດ: ມູນຄ່າຂອງການດໍາເນີນການລະງັບຂໍ້ພິພາດ ແມ່ນຄາດວ່າຈະມີມູນຄ່າ $17,000.00, ຊຶ່ງເປັນການຈ່າຍສໍາລັບຄ່າເອກະສານເຊັ່ນ: ການສົ່ງເອກະສານ ແລະ ການແຈ້ງການສະບັບນີ້, ຕິດຕາມຄໍາຂໍຍົກເວັ້ນ ແລະ ຄໍາບອກກ່າວຄັດຄ້ານ, ກວດກາການສົ່ງເອກະສານ ແລະ ແບບຟອມພາສີ, ການແປພາສາຂອງເອກະສານໃຫ້ກັບສະມາຊິກຄະດີ ແລະ ການລາຍງານໃຫ້ແກ່ບຸກຄົນທີສາມ ແລະ ສານ.

- ເຊັກໃດກໍຕາມທີ່ອອກໃຫ້ກັບສະມາຊິກໃນການລະງັບຂໍ້ພິພາດ ຍັງຄົງຖືກຕ້ອງ ແລະ ສາມາດຕໍ່ລອງໄດ້ເປັນເວລາ 180 ວັນ ນັບຈາກວັນທີທີ່ພວກເຂົາເຈົ້າອອກໜັງສື. ໃນການຊໍາລະຄ່າລະງັບຂໍ້ພິພາດສ່ວນບຸກຄົນໃນຄັ້ງໜຶ່ງເຊັກຈະບໍ່ຖືກເບີກເປັນເງິນສົດໄດ້ພາຍໃນ ໜຶ່ງຮ້ອຍແປດ (180) ວັນ, ຜູ້ດູແລຂໍ້ຕົກລົງຈະຍື່ນເງິນທີ່ສະເໜີໂດຍເຊັກທີ່ຍັງບໍ່ໄດ້ຂຶ້ນເງິນສົດນັ້ນໃຫ້ກັບຜູ້ຄຸ້ມຄອງລັດຄາລິຟໍເນຍເພື່ອເປັນການມັດຈໍາຊັບສິນທີ່ບໍ່ໄດ້ຮຽກຮ້ອງສິດໃນຊື່ຂອງສະມາຊິກໃນການດໍາເນີນການລະງັບຂໍ້ພິພາດ.

## ຂ້າພະເຈົ້າຈະໄດ້ຫຍັງຈາກຂໍ້ຕົກລົງ?

ຖ້າທ່ານບໍ່ໄດ້ຖອດຖອນຂໍ້ຕົກລົງ, ທ່ານຈະໄດ້ຮັບການແບ່ງປັນກອງທຶນການລະງັບຂໍ້ພິພາກສຸດທິຫຼັງຈາກທີ່ສານພິຈາລະນາຂໍ້ຕົກລົງ. ຄາດຄະເນການປັນຜົນຂອງທ່ານ, ນັ້ນແມ່ນການຄາດຄະເນການຊໍາລະຄ່າລະງັບຂໍ້ພິພາດສ່ວນບຸກຄົນ ແລະ ຍອດລວມອາທິດຂອງການເຮັດວຽກຂອງທ່ານຈາກການບັນທຶກຂອງ Spectranetics ໃຊ້ເພື່ອການຄິດໄລ່, ແມ່ນລາຍການໃນໜ້າທໍາອິດຂອງແຈ້ງການສະບັບນີ້. ເພື່ອຈຸດປະສົງຄ່າພາສີ, ການຊໍາລະຄ່າລະງັບຂໍ້ພິພາດສ່ວນບຸກຄົນຈະໄດ້ຮັບການຈັດສັນ ແລະ ປະຕິບັດດັ່ງນີ້: (1) 20% ເປັນຄ່າແຮງງານ; (b) 40% ເປັນຄ່າໃຊ້ຈ່າຍທີ່ຮຽກເງິນຄືນຕາມຫຼັງ; (c) 40% ເປັນຄ່າປັບໃໝ ແລະ ຄ່າດອກເບ້ຍ. ຜູ້ດູແລຂໍ້ຕົກລົງຈະຮັບຜິດຊອບການຂຽນອອກຟອມໜັງສືຮ້ອງຮຽນ W-2 ສໍາລັບຈໍານວນເງິນທີ່ຖືວ່າເປັນ “ຄ່າແຮງງານ” ແລະ IRS ຟອມ 1099 ສໍາລັບສ່ວນຈັດສັນເປັນຄ່າປັບໃໝ ແລະ ດອກເບ້ຍ.

## ການປ້ອງກັນຂອງການລະງັບຂໍ້ພິພາດແມ່ນຄິດໄລ່ແບບໃດ?

ການຊໍາລະເງິນຂອງການລະງັບຄະດີສ່ວນບຸກຄົນຂອງທ່ານແມ່ນການແບ່ງສັດສ່ວນຂອງທ່ານກັບຈໍານວນສຸດທິການລະງັບອີງໃສ່ການເຮັດວຽກອາທິດທີ່ໄດ້ຮັບການຮັບຮອງທັງໝົດຂອງທ່ານ, ຊຶ່ງຈໍານວນຂອງອາທິດຂອງການເຮັດວຽກທັງໝົດທີ່ທ່ານໄດ້ເຮັດວຽກໃນນາມເປັນພະນັກງານ ຫຼື ຕໍາແໜ່ງທີ່ທຽບເທົ່າ (ອີງຕາມບັນທຶກຂອງ Spectranetics) ໃນລະຫວ່າງໄລຍະ ວັນທີ 20 ເມສາ 2014 ເຖິງ ວັນທີ 17 ສິງຫາ 2022. ອາທິດຂອງການເຮັດວຽກທີ່ຜ່ານການຮັບຮອງຂອງທ່ານຈະຖືກຫານດ້ວຍອາທິດຂອງການເຮັດວຽກທີ່ຜ່ານການຮັບຮອງທັງໝົດສໍາລັບສະມາຊິກດໍາເນີນຄະດີທັງໝົດ, ສົ່ງຜົນໃຫ້ອັດຕາສ່ວນການຊໍາລະເງິນຂອງທ່ານ. ຈາກນັ້ນອັດຕາສ່ວນການຊໍາລະເງິນຈະຖືກຄູນດ້ວຍຈໍານວນເງິນທີ່ຊໍາລະສຸດທິເພື່ອກໍານົດການຊໍາລະເງິນສໍາລັບການຊໍາລະເງິນລາຍບຸກຄົນຂອງທ່ານ.

ຖ້າທ່ານໂຕ້ແຍ້ງຈໍານວນການເຮັດວຽກພາຍໃນອາທິດທີ່ໄດ້ລະບຸໄວ້ຂ້າງເທິງນັ້ນ, ທ່ານຈະມີໂອກາດໃຫ້ເອກະສານ ແລະ/ຫຼື ຄໍາອະທິບາຍເພື່ອສະແດງອາທິດຂອງການເຮັດວຽກທີ່ຄັດແຍ່ງກັບຜູ້ດູແລຂໍ້ຕົກລົງ. ໃນການເລີ່ມຕົ້ນຂໍ້ພິພາດກັບຜູ້ດູແລຂໍ້ຕົກລົງ, ຂໍ້ພິພາດຂອງທ່ານຕ້ອງ (a) ຖືກຂຽນເປັນລາຍລັກອັກສອນ; (b) ແຈ້ງຊື່ຂອງທ່ານ, ແລະ (c) ລວມທັງພິມ ຫຼື ຂຽນດ້ວຍລາຍມືຄໍາຖະແຫຼງການອະທິບາຍເປັນຫຍັງທ່ານຈຶ່ງບໍ່ເຫັນດີກັບສະຖານະການເຮັດວຽກເປັນອາທິດທີ່ຖືກແຈ້ງຂ້າງຕົ້ນ. ຂໍ້ພິພາດທີ່ໄດ້ຂຽນຂຶ້ນຕ້ອງໄດ້ຮັບການລົງລາຍເຊັນ ແລະ ປະທັບຕາໄປສະນີຊັ້ນໜຶ່ງຂອງສະຫະລັດສົ່ງຜ່ານທາງໄປສະນີບໍ່ໃຫ້ກາຍ "ມື້ສິ້ນສຸດການຕອບກັບ" **ວັນທີ** 14 **ພະຈິກ** 2022**.** ~~[60 calendar days after initial mailing]~~ ເຖິງ:

**ຜູ້ດູແລຂໍ້ຕົກລົງ**

Louangamath v. The Spectranetics Corporation, Inc.

50 Corporate Park,

Irvine, California, 92606

ໝາຍເລກໂທລະສັບ: 1 (888) 846-0324

ແຟັກ: (949) 419-3446

ຖ້າຫາກວ່າເກີດມີຂໍ້ຂັດແຍ່ງ, ຜູ້ດູແລຂໍ້ຕົກລົງຈະປຶກສາກັບບຸກຄົນທີສາມເພື່ອກໍານົດວ່າການແກ້ໄຂແມ່ນໃຫ້ມີຄວາມຮັບປະກັນ. ຜູ້ດູແລຂໍ້ຕົກລົງຈະກໍານົດສິດທິສໍາລັບ ແລະ ຈໍານວນເງິນຂອງການຊໍາລະເພື່ອລະງັບຂໍ້ພິພາດສ່ວນບຸກຄົນພາຍໃຕ້ຂໍ້ກໍານົດຂອງສັນຍາທີ່ຕົກລົງກັນ. ຜູ້ດໍາເນີນການຂໍ້ຕົກລົງຈະກໍານົດສິດທິ ແລະ ຈໍານວນເງິນຂອງການດໍາເນີນການຊໍາລະສ່ວນບຸກຄົນຈະມີຜົນຜູກພັນ.

ການດໍາເນີນການຊໍາລະເງິນສ່ວນບຸກຄົນຂອງທ່ານອາດຈະແຕກຕ່າງຈາກລາຍການຄາດຄະເນການຊໍາລະເງິນໃນແບບຟອມນີ້ ຖ້າວ່າມີໃຜຜູ້ໜຶ່ງໃນສະມາຊິກຂອງການດໍາເນີນຄະດີຖອນຕົວຈາກຄະດີ ແລະ ຂຶ້ນຢູ່ກັບຈໍານວນເງິນທີ່ສານອະນຸມັດສໍາລັບລາງວັນໃຫ້ແກ່ທີ່ປຶກສາຄະດີ, ຕົວແທນຄະດີ ແລະ ຜູ້ດໍາເນີນການຂໍ້ຕົກລົງ. ກໍານົດເວລາການຕອບກັບຂອງສະມາຊິກຄະດີທີ່ຍື່ນໃໝ່ອີກຄັ້ງຈະຂະຫຍາຍເວລາເປັນ 15 ວັນນັບຈາກວັນທີທີ່ຜູ້ດູແລຂໍ້ຕົກລົງສົ່ງຈົດໝາຍແຈ້ງຂໍ້ຕົກລົງອີກຄັ້ງ.

## ຈະເກີດຫຍັງຂຶ້ນຖ້າຂ້າພະເຈົ້າບໍ່ເຮັດຫຍັງເລີຍ?

ຖ້າທ່ານບໍ່ໄດ້ເຮັດຫຍັງ ແລະ ສານພິຈາລະນາຂໍ້ຕົກລົງການພິຈາລະນາການໄຕສ່ວນຄັ້ງສຸດທ້າຍ, ທ່ານຈະໄດ້ຮັບການດໍາເນີນການຊໍາລະເງິນສ່ວນບຸກຄົນຂອງທ່ານໂດຍບໍ່ຕ້ອງດໍາເນີນການໃດໆເພີ່ມເຕີມຈາກທ່ານ.

ເພື່ອແນ່ໃຈວ່າໄດ້ຮັບໃບບິນຂອງການດໍາເນີນການຊໍາລະເງິນສ່ວນບຸກຄົນຂອງທ່ານ, ທ່ານຕ້ອງຢັ້ງຢືນການປ່ຽນແປງໃດໆທີ່ເກີດຂຶ້ນໃນຊື່ຂອງທ່ານ, ທີ່ຢູ່ໄປສະນີ ແລະ/ຫຼື ໝາຍເລກໂທລະສັບໃຫ້ກັບຜູ້ດູແລຂໍ້ຕົກລົງຂອງທ່ານ. **ມັນແມ່ນຄວາມຮັບຜິດຊອບຂອງທ່ານທີ່ຈະຮັກສາຜູ້ດູແລການແຈ້ງຂໍ້ຕົກລົງເພື່ອອັບເດດຂໍ້ມູນໃຫ້ແກ່ທ່ານ ແລະ ຂັ້ນຕອນການຊໍາລະເງິນສ່ວນບຸກຄົນຈະຖືກສົ່ງໄປຫາທີ່ຢູ່ຄັ້ງຫຼ້າສຸດທາງໄປສະນີຊຶ່ງຢູ່ໃນພາຍຂອງຜູ້ດູແລຂໍ້ຕົກລົງໃຫ້ກັບທ່ານ.**

## ເມື່ອໃດ ແລະ ເວລາໃດທີ່ຈະມີການພິຈາລະນາອະນຸມັດຂັ້ນສຸດທ້າຍ?

ສານຈະຈັດໃຫ້ມີການພິຈາລະນາອະນຸມັດຂັ້ນສຸດທ້າຍໃນ ຫຼື ໃກ້ຈະຮອດວັນທີ 16 ກຸມພາ 2023, ເວລາ 2:00 ໂມງແລງ. ໃນຫ້ອງສານໝາຍເລກ 6 ຊັ້ນ 2 ຂອງ Ronald V. ອາຄານລັດຖະບານກາງ Dellums ແລະ ຫ້ອງການສານສະຫະລັດ, 1301 Clay Street, Oakland, California 94612, ເພື່ອຕັດສິນໃຈວ່າຈະອະນຸມັດຂໍ້ຕົກລົງ ຫຼື ບໍ່. ວັນທີນີ້ອາດຈະມີການປ່ຽນແປງໂດຍບໍ່ມີການແຈ້ງກ່ອນລ່ວງໜ້າໄປຫາຄະດີ. ກະລຸນາກວດເບິ່ງການແກ້ໄຂຂໍ້ພິພາດໄດ້ທີ່ເວັບໄຊທ໌ (www.Louangamathsettlement.com) ຫຼື ເວັບໄຊທ໌ PACER ຂອງສານ, ຊຶ່ງສາມາດເຂົ້າເຖິງເວັບໄຊທ໌ຂອງສານໄດ້ທີ່ https://ecf.cand.uscourts.gov, ເພື່ອຢັ້ງຢືນວ່າວັນທີຈະບໍ່ມີການປ່ຽນແປງ. ຖ້າສານພິຈາລະນາຂໍ້ຕົກລົງ, ຂໍ້ຕົກລົງລວມຈະຖືກສົ່ງເຖິງທ່ານຜ່ານທາງໄປສະນີຄາດວ່າພາຍໃນ 14 ວັນນັບຈາກວັນທີ່ອອກຂໍ້ຕົກລົງ, ເວັ້ນເສຍແຕ່ວ່າມີການຄັດຄ້ານ ຫຼື ການອຸທອນ. ມັນກໍ່ບໍ່ແນ່ນອນສະເໝີໄປເມື່ອບັນຫາດັ່ງກ່າວສາມາດແກ້ໄຂໄດ້ ແລະ ການແກ້ໄຂບັນຫາດັ່ງກ່າວຕ້ອງໃຊ້ເວລາ.

ກະລຸນາຮູ້ໄວ້ວ່າ ວັນຂອງການໄຕ່ສວນຂັ້ນສຸດທ້າຍອາດຈະມີການປ່ຽນແປງໂດຍທີ່ບໍ່ໄດ້ແຈ້ງໃຫ້ຊາບລ່ວງໜ້າ. ສະມາຊິກຄະດີຈຶ່ງແນະນຳໃຫ້ກວດເບິ່ງທີ່ເວັບໄຊທ໌ຂອງສານເພື່ອຢັ້ງຢືນວ່າ ວັນທີ ແລະ ສະຖານທີ່ຈະບໍ່ມີການປ່ຽນແປງ.

## ການອ້າງສິດໃດທີ່ຂ້າພະເຈົ້າຈະຕ້ອງຍອມແພ້ຖ້າວ່າຂ້າພະເຈົ້າຖືກລະບຸວ່າເປັນສ່ວນໜຶ່ງໃນຂໍ້ຕົກລົງ?

ຍົກເວັ້ນແຕ່ວ່າຈະບໍ່ລວມເອົາຕົວທ່ານເອງ, ທ່ານຈະຍັງຄົງເປັນສະມາຊິກດຳເນີນຄະດີ ແລະ ທ່ານຈະຕ້ອງຜູກພັນຕາມເງື່ອນໄຂຂອງການດຳເນີນຄະດີ, ລວມເຖິງການອ້າງສິດການປ່ອຍຕົວຕາມທີ່ໄດ້ອະທິບາຍໄວ້ຂ້າງລຸ່ມນີ້. ຊຶ່ງໝາຍຄວາມວ່າທ່ານຈະບໍ່ສາມາດຟ້ອງ ຫຼື ຟ້ອງຮ້ອງຕໍ່ ຫຼື ເປັນສ່ວນໜຶ່ງຂອງຄະດີຄວາມອື່ນໆທີ່ກ່ຽວຂ້ອງກັບການຮ້ອງຮຽນການປ່ອຍຕົວ.
ນອກຈາກນີ້ກໍ່ຍັງໝາຍເຖິງວ່າຄຳສັ່ງທັງໝົດຂອງສານຈະມີຜົນບັງຄັບໃຊ້ກັບທ່ານ ແລະ ມີຜົນຜູກພັນທາງກົດໝາຍກັບທ່ານ.

## <u>ການອ້າງສິດການປ່ອຍຕົວ</u>

ການອ້າງສິດການປ່ອຍຕົວໝາຍເຖິງ ທຸກໆການກະທຳ ແລະ ຂໍ້ເທັດຈິງທີ່ເກີດຂຶ້ນ ຫຼື ທິດສະດີທີ່ຖືກຕ້ອງຕາມກົດໝາຍທີ່ຖືກກ່າວຫາໃນການຮ້ອງຮຽນ ຫຼື ຖືກກ່າວຫາຢ່າງສົມເຫດສົມຜົນຕາມຂໍ້ເທັດຈິງ ແລະ ທິດສະດີທາງກົດໝາຍທີ່ມີຢູ່ໃນການຮ້ອງຮຽນຂອງຝ່າຍປະຕິບັດການ ລວມເຖິງການຮຽກຮ້ອງການບັນເທົາທຸກຕໍ່ໄປນີ້ທັງໝົດ: (a) ການລະເມີດການຮຽກຂໍເງິນຄືນ (ກົດໝາຍແຮງງານ § 2802); (b) ການຜ່າຝືນເວລາພັກເພື່ອກິນເຂົ້າ (ກົດໝາຍແຮງງານ §§ 226.7 ແລະ 512, ມາດຕາ 11 ຂອງຄຳສັ່ງຄ່າແຮງງານ); (c) ການຜ່າຝືນຊົ່ວໂມງຂອງການພັກຜ່ອນ (ກົດໝາຍແຮງງານ §§ 226.7, ຄຳສັ່ງຂອງຄ່າແຮງງານ § 12); (d) ການປະຕິເສດບໍ່ຈ່າຍຄ່າແຮງງານເກີນຊົ່ວໂມງເຮັດວຽກ ແລະ ຄ່າແຮງງານປະຈຳ, ລວມເຖິງການປະຕິເສດໃນການຄິດໄລ່ອັດຕາຄ່າແຮງງານປົກກະຕິຢ່າງຖືກຕ້ອງ (ກົດໝາຍແຮງງານ §§ 510, 558, 1194, 1197 ແລະ 1198, ເຊັ່ນດຽວກັນກັບມາດຕາ 2 ແລະ 3 ຄຳສັ່ງຄ່າແຮງງານ); (e) ການລະເມີດຂໍ້ຕົກລົງວ່າດ້ວຍຄ່າແຮງງານ (ກົດໝາຍແຮງງານ §§ 226, 1174); (f) ການດຳເນີນທຸລະກິດທີ່ບໍ່ເປັນທຳ (ກົດໝາຍທຸລະກິດ ແລະ ອາຊີບ § 17200, ແລະ ອື່ນໆ.); (g) ບົດລົງໂທດທາງແພ່ງພາຍໃຕ້ກົດໝາຍໄອຍະການສູງສຸດ, ມາດຕາ 2699.3, ແລະ ອື່ນໆ ຂອງກົດໝາຍແຮງງານແຫ່ງລັດຄາລິຟໍເນຍ ("PAGA"); (h) ການຮ້ອງສິດອື່ນໆ ຫຼື ບົດລົງໂທດພາຍໃຕ້ກົດໝາຍຂອງຄ່າຈ້າງ ແລະ ຊົ່ວໂມງເຮັດວຽກ ທີ່ລະບຸໄວ້ໃນການຮ້ອງຟ້ອງ, ມາດຕາ 204, 226, 226.7, 510, 512, 1174, 1194, 1197, 1198, ແລະ 2802 ຂອງກົດໝາຍແຮງງານຂອງລັດຄາລິຟໍເນຍ; ແລະ (i) ຄວາມສູນເສຍທັງໝົດ, ການລົງໂທດ, ດອກເບ້ຍ ແລະ ຈຳນວນເງິນອື່ນໆທີ່ໄດ້ຮັບຄືນຕາມສາເຫດທີ່ລະບຸໄວ້ ຂອງການດຳເນີນການພາຍໃຕ້ກົດໝາຍຂອງລັດຄາລິຟໍເນຍ ແລະ ລັດຖະບານກາງ, ເພື່ອເປັນການຂະຫຍາຍການອະນຸຍາດ, ລວມເຖິງ ແຕ່ບໍ່ຈຳກັດຂອງກົດໝາຍແຮງງານຂອງລັດຄາລິຟໍເນຍຕາມຂໍ້ເທັດຈິງທີ່ຖືກກ່າວຫາໃນການດຳເນີນການ, ຄຳສັ່ງຄ່າຈ້າງທີ່ກ່ຽວຂ້ອງກັບຂໍ້ເທັດຈິງທີ່ຖືກກ່າວຫາໃນການຮ້ອງຮຽນ ແລະ ກົດໝາຍການແຂ່ງຂັນທີ່ບໍ່ເປັນທຳຂອງລັດຄາລິຟໍເນຍ. ໄລຍະຂອງການປ່ອຍຕົວຈະເປັນການຂະຫຍາຍໃຫ້ໄລຍະຂອງການດຳເນີນຄະດີມີຂີດຈຳກັດ.

ຜົນຂອງຄຳພິພາກສາຈະຄືກັບຜົນຂອງການປ່ອຍຕົວ. ພ້ອມດຽວກັບນີ້, ສະມາຊິກດຳເນີນຄະດີຈະຖືກຜູກມັດໂດຍຖືກຈຳກັດການຮຽກຮ້ອງສິດການປ່ອຍຕົວພາຍໃຕ້ກົດໝາຍມາດຕາ 1542 ຂອງລັດຄາລີຟໍເນຍ, ຊຶ່ງລະບຸວ່າ: "ການປ່ອຍຕົວທົ່ວໄປບໍ່ໄດ້ຂະຫຍາຍໄປເຖິງການຮຽກຮ້ອງສິດຊຶ່ງເຈົ້າໜ້າທີ່ ຫຼື ຜູ້ທີ່ປ່ອຍຕົວບໍ່ຮູ້ ຫຼື ສົງໃສວ່າມີຕົວຕົນຢູ່ໃນຄວາມຊ່ວຍເຫຼືອຂອງ ທ້າວ ຫຼື ນາງ ໃນເວລາທີ່ກຳລັງດຳເນີນການປ່ອຍຕົວ ແລະ ແຕ່, ຖ້າວ່າ ທ້າວ ຫຼື ນາງ ຮູ້ ຈະໄດ້ຮັບຜົນກະທົບຕໍ່ ທ້າວ ຫຼື ນາງ ຂໍ້ຕົກລົງລະຫວ່າງ ລູກໜີ້ ຫຼື ຜູ້ທີ່ຖືກປ່ອຍຕົວ." ການສະຫຼະສິດຕາມມາດຕາ 1542 ທີ່ຈຳກັດທີ່ລະບຸວ່າກ່ຽວຂ້ອງກັບການຮຽກຮ້ອງສິດທັງໝົດຕໍ່ບຸກຄົນທີ່ສາມທີ່ກ່ຽວຂ້ອງ, ເຖິງວ່າ ຈະຮູ້ ຫຼື ບໍ່ຮູ້ກໍ່ຕາມ, ພາຍໃນຄຳຈຳກັດຄວາມ "ການຮຽກຮ້ອງສິດທີ່ກ່ຽວຂ້ອງ," ໂດຍບໍ່ຄຳນຶງເຖິງຄວາມຈິງ ຫຼື ກົດໝາຍຂັ້ນພື້ນຖານກສຳລັບການຮຽກຮ້ອງສິດ. ເຖິງຢ່າງໃດກໍ່ຕາມ, ເພື່ອໃຫ້ມີຄວາມຊັດເຈນ, ຂອບເຂດຂອງການສະຫຼະສິດມາດຕາ 1542 ແມ່ນມີຈຳກັດທີ່ກ່ຽວຂ້ອງກັບການຮຽກຮ້ອງສິດເທົ່ານັ້ນ. ການສະຫຼະສິດຕາມມາດຕາ 1542 ຢ່າງຈຳກັດນັ້ນແມ່ນໄດ້ຮ່າງຢ່າງຈຳກັດ ແລະ ຈຳເປັນເພື່ອໃຫ້ແນ່ໃຈວ່າຈຳເລີຍແມ່ນໄດ້ຮັບຄວາມສະຫງົບຂອງຈິດໃຈອີງຕາມມັດຕິການຮຽກຮ້ອງສິດຊຶ່ງຖືກ ຫຼື ອາດຖືກກ່າວຫາອີງໃສ່ຄວາມຈິງ ແລະ ທິດສະດີຕາມກົດໝາຍທີ່ລະບຸໃນການຮ້ອງຮຽນ.

ການປ່ອຍຈະຂະຫຍາຍໄປເຖິງຈຳເລີຍ, ແລະ ອະດີດຂອງຈຳເລີຍທັງໝົດ, ປັດຈຸບັນນີ້ ແລະ/ຫຼື ອານາຄົດ, ໂດຍຕົງ ແລະ/ຫຼື ທາງອ້ອມ, ວິຊາການ, ກຳມະການ, ພະນັກງານ, ຕົວແທນ, ຜູ້ຕາງໜ້າ, ບັນດາທະນາຍຄວາມ, ຜູ້ປະກັນຕົນ, ຮຸ້ນສ່ວນ, ນັກລົງທຶນ, ຂາຮຸ້ນ, ຜູ້ດູແລ, ບໍລິສັດແມ່, ຮຸ້ນສ່ວນ, ບໍລິສັດໃນເຄືອ, ພັນທະມິດ, ຂະແໜງ, ລຸ້ນກ່ອນ, ຜູ້ສືບທອດ, ຜູ້ທີ່ຖືກແຕ່ງຕັ້ງ, ແຜນສິດຜົນປະໂຫຍດ, ແລະ ການຮ່ວມທຸນ.

## **ຂ້າພະເຈົ້າຄວນຈະເຮັດແນວໃດຖ້າຂ້າພະເຈົ້າບໍ່ຕ້ອງການເປັນສ່ວນໜຶ່ງໃນການດຳເນີນການ?**

ຖ້າຫາກທ່ານບໍ່ຂໍໃຫ້ເຂົ້າຮ່ວມໃນການດຳເນີນການ, ທ່ານອາດຈະແຍກຕົວເອງ (ໂດຍທົ່ວໄປແລ້ວຈະເອີ້ນວ່າ "ການຖອດຖອນ") ໂດຍການຍື່ນຄຳຮ້ອງຂໍຍົກເວັ້ນເປັນລາຍລັກອັກສອນໃນເວລາທີ່ເໝາະສົມ ແລະ ຖືກຕ້ອງໄປເຖິງຜູ້ເບິ່ງແຍງຂໍ້ຕົກລົງ. ການຮ້ອງຂໍໃນການຖອດຖອນນັ້ນ, ຕ້ອງ (a) ຂຽນເປັນລາຍລັກອັກສອນ; (b) ລະບຸຊື່ຂອງທ່ານ, ແລະ (c) ລວມເຖິງປະເພດ ຫຼື ການສະເໜີຍົກເວັ້ນຂໍ້ຕົກລົງທີ່ຂຽນດ້ວຍລາຍມືຈາກການດຳເນີນການຄະດີ ແລະ ການລະບຸໃນເນື້ອໃນ: "ຂ້າພະເຈົ້າມີຄວາມປະສົງທີ່ຢາກຈະຂໍໃຫ້ຖອດຖອນອອກຈາກການດຳເນີນຄະດີ ແລະ ບໍ່ເຂົ້າຮ່ວມໃນ *Louangamath v. The Spectranetics Corporation.* ຂ້າພະເຈົ້າເຂົ້າໃຈວ່າ ໂດຍການຮ້ອງຂໍໃນການຍົກເວັ້ນຈາກການດຳເນີນການ, ຂ້າພະເຈົ້າຈະບໍ່ໄດ້ຮັບເງິນຈາກລາຍການຂໍ້ຕົກລົງນີ້ໃນແຈ້ງການສະບັບນີ້. [Dated, Signed.]"

ທ່ານຕ້ອງລົງລາຍເຊັນສ່ວນຕົວເພື່ອຮ້ອງຂໍການຍົກເວັ້ນ ແລະ ອາດຈະມີບາງຄົນລົງລາຍເຊັນແທນທ່ານ, ຫຼື ບໍທ່ານອາດຈະເປັນຕົວແທນຂອງກຸ່ມຍື່ນການຮ້ອງຂໍການຍົກເວັ້ນ ຫຼື ຜູ້ໃດຜູ້ໜຶ່ງ. ເພື່ອໃຫ້ໄດ້ທັນຕາມເວລາ, ການຮ້ອງຂໍການຍົກເວັ້ນຂອງທ່ານຈະຕ້ອງໄດ້ຮັບການລົງລາຍເຊັນ ແລະ ປະທັບຕາໄປສະນີສົ່ງໄປຜ່ານທາງໄປສະນີຊັ້ນໜຶ່ງບໍ່ໃຫ້ກາຍ "ກຳນົດເວລາການຕອບຮັບ" ວັນທີ **14** ພະຈິກ 2022~~. [60 calendar days after initial mailing]~~] ເຖິງ:

**ຜູ້ດູແລຂໍ້ຕົກລົງ**

Louangamath v. The Spectranetics Corporation, Inc.

50 Corporate Park,

Irvine, California, 92606

ໝາຍເລກໂທລະສັບ: 1 (888) 846-0324

ແຟັກ: (949) 419-3446

ຖ້າທ່ານຍື່ນສະເໜີສຳລັບການຍົກເວັ້ນທີ່ທັນເວລາ, ຫຼັງຈາກນັ້ນຈົນກວ່າຈະສົ່ງບິນໃຫ້ແກ່ທ່ານ ທ່ານຈະບໍ່ໄດ້ເປັນສະມາຊິກຂອງການດຳເນີນຄະດີ, ທ່ານຈະຖືກຫ້າມການເປັນຜູ້ເຂົ້າຮ່ວມໃນສ່ວນໃດສ່ວນໜຶ່ງຂອງການດຳເນີນການ, ທ່ານອາດຈະບໍ່ຖືກຄັດຄ້ານໃຫ້ການ ດຳເນີນການ ແລະ ທ່ານອາດຈະບໍ່ໄດ້ຮັບສິດຜົນປະໂຫຍດ, ລວມເຖິງການບໍ່ມີເງິນຈາກການດຳເນີນການ. ຖ້າຫາກທ່ານມີຄວາມຕ້ອງການຂໍ, ທ່ານອາດຈະດຳເນີນການຕິດຕາມ ໂດຍການອອກຄ່າໃຊ້

ຈ່າຍເອງຕໍ່ການຮຽກຮ້ອງສິດທີ່ທ່ານມີຕໍ່ Spectranetics. ຖ້າທ່ານບໍ່ຍື່ນການຮ້ອງຂໍການຍົກເວັ້ນທີ່ຖືກຕ້ອງ ແລະ ທັນເວລາ, ທ່ານຈະຍັງຖືກລວມຢູ່ໃນການດໍາເນີນຄະດີ ແລະ ຜູກພັນຕາມເງື່ອນໄຂຂອງຂໍ້ຕົກລົງ (ລວມເຖິງລາຍການຮຽກຮ້ອງສິດທີ່ກ່ຽວຂ້ອງຂ້າງເທິງນັ້ນ), ບໍ່ວ່າທ່ານຈະຄັດຄ້ານການດໍາເນີນຄະດີ ຫຼື ບໍ່ກໍຕາມ. ກໍານົດເວລາການຕອບກັບຂອງສະມາຊິກຄະດີທີ່ຍື່ນໃໝ່ອີກຄັ້ງຈະຂະຫຍາຍເວລາເປັນ 15 ວັນນັບຈາກວັນທີທີ່ຜູ້ດູແລຂໍ້ຕົກລົງສົ່ງຈົດໝາຍແຈ້ງຂໍ້ຕົກລົງອີກຄັ້ງ.

## ຂ້າພະເຈົ້າຄວນຈະເຮັດແນວໃດຖ້າວ່າຂ້າພະເຈົ້າຄັດຄ້ານຂໍ້ຕົກລົງຂອງການດໍາເນີນການ?

ສະມາຊິກຂອງການດໍາເນີນຄະດີຜູ້ໃດກໍຕາມທີ່ບໍ່ໄດ້ຮ້ອງຂໍຈາກການດໍາເນີນການອາດຈະຖືກຄັດຄ້ານການດໍາເນີນການ, ລວມເຖິງການຄັດຄ້ານໄປທີ່ການເຄື່ອນໄຫວຂອງທີ່ປຶກສາຄະດີສໍາລັບຄ່າທໍານຽມ ແລະ ຄ່າໃຊ້ຈ່າຍ. ການເຄື່ອນໄຫວຂອງທີ່ປຶກສາຄະດີສໍາລັບຄ່າທໍານຽມຂອງທະນາຍຄວາມ ແລະ ລາຍຈ່າຍຈະຖືກຍື່ນ ແລະ ມີໃຫ້ທ່ານເພື່ອກວດຄືນໂດຍບໍ່ໃຫ້ກາຍ ວັນທີ 5 ຕຸລາ 2022. ~~[insert date forty (40) days prior to deadline to object].~~ ຂໍໃຫ້ຈື່ໄວ້ວ່າການຄັດຄ້ານແມ່ນບໍ່ຄືກັນກັບການສະເໜີທີ່ຈະໄດ້ຮັບການຍົກເວັ້ນ. ການຍື່ນເອກະສານຄັດຄ້ານຈະ **ບໍ່** ລວມທ່ານຈາກການດໍາເນີນການຄະດີ. **ຖ້າການຄັດຄ້ານແມ່ນການຖືກຄອບງໍາ, ທ່ານຈະຍັງຄົງຜ່ານໂດຍການດໍາເນີນການ.**

ທ່ານສາມາດບອກໃຫ້ສານປະຕິເສດການອະນຸມັດໂດຍການຍື່ນການຄັດຄ້ານ. ທ່ານບໍ່ສາມາດບອກໃຫ້ສານອອກຄໍາສັ່ງການດໍາເນີນການທີ່ແຕກຕ່າງໄດ້; ສານສາມາດພຽງແຕ່ອະນຸມັດເທົ່ານັ້ນ ຫຼື ປະຕິເສດການດໍາເນີນການ. ຖ້າວ່າສານປະຕິເສດການອະນຸມັດ, ກໍ່ຈະບໍ່ມີການໂອນເງິນຊໍາລະເພື່ອສົ່ງອອກ ແລະ ຄະດີກໍ່ຈະຍັງຄົງສືບຕໍ່. ຖ້າວ່າສິ່ງນັ້ນເປັນສິ່ງທີ່ທ່ານຕ້ອງການໃຫ້ມັນເກີດຂຶ້ນ, ທ່ານກໍ່ຈະຕ້ອງຄັດຄ້ານ.

ການຄັດຄ້ານໃດກໍຕາມທີ່ມີຈຸດປະສົງເພື່ອການດໍາເນີນການຈະຕ້ອງ ຂຽນເປັນລາຍລັກອັກສອນ. ຖ້າທ່ານຍື່ນຄໍາຄັດຄ້ານເປັນລາຍລັກອັກສອນໃນເວລາທີ່ເໝາະສົມ, ທ່ານອາດຈະ, ແຕ່ບໍ່ສະເໜີໃຫ້, ລະບຸວ່າການພິຈາລະນາຂັ້ນສຸດທ້າຍ, ບໍ່ວ່າຈະການຍື່ນດ້ວຍຕົວທ່ານເອງ ຫຼື ຜ່ານທາງທະນາຍຄວາມຂອງທ່ານ. ຖ້າທ່ານລະບຸໂດຍທະນາຍຄວາມສ່ວນຕົວຂອງທ່ານ, ທ່ານຕ້ອງຮັບຜິດຊອບຄ່າຈ້າງ ແລະ ຈ່າຍຄ່າທະນາຍຄວາມ. ການຄັດຄ້ານທີ່ເປັນລາຍລັກອັກສອນທັງໝົດ ແລະ ເອກະສານທີ່ກ່ຽວຂ້ອງຕ້ອງ (a) ລະບຸຊື່ເຄສຢ່າງຊັດເຈນ ແລະ ໝາຍເລກ - Louangamath v. Spectranetics Corporation, ເຄສໝາຍເລກ 4:18-cv-03634-JST), (b) ຈະຖືກຍື່ນໄປທີ່ສານເຊັ່ນກັນໂດຍການສົ່ງບັນດາເອກະສານເຫຼົ່ານັ້ນທາງໄປສະນີໄປທີ່ທະບຽນຂອງການດໍາເນີນການຄະດີ, Ronald V. ອາຄານລັດຖະບານກາງ Dellums ແລະ ຫ້ອງການສານສະຫະລັດ, ຫ້ອງການສານນໍ້າເບີ 6, ຊັ້ນທີ 2 , 1301 Clay Street, Oakland, California 94612 , ຫຼື ໂດຍການຍື່ນບັນດາເອກະສານເຫຼົ່ານັ້ນໂດຍກົງ ໄດ້ທີ່ຫ້ອງການສານເມືອງຂອງສະຫະລັດອາເມລິກາສໍາລັບເມືອງທາງພາກເໜືອຂອງລັດຄາລິຟໍເນຍ ແລະ (c) ຖືກຍື່ນ ຫຼື ປະທັບຕາໄປສະນີ ຫຼື ກ່ອນ "ວັນໝົດອາຍຸຂອງການຕອບກັບ" **ວັນທີ** 14 **ພະຈິກ** 2022.~~[60 calendar days after initial mailing]~~ ນອກຈາກນັ້ນ ການຄັດຄ້ານຂອງທ່ານຄວນຈະລະບຸຕົວທ່ານໃຫ້ຊັດເຈນໂດຍຊື່ຂອງທ່ານ, ລະບຸພື້ນຖານສໍາລັບການຄັດຄ້ານຂອງທ່ານ ແລະ ລະບຸວ່າໃຜເປັນຜູ້ຄັດຄ້ານ, ເຊັ່ນ., ເຖິງວ່າການຄັດຄ້ານຈະມີຜົນພຽງແຕ່ກັບທ່ານເທົ່ານັ້ນກໍຕາມ ກັບກຸ່ມຍ່ອຍສະເພາະຂອງຄະດີ ຫຼື ທັງໝົດຂອງຄະດີ. ກໍານົດເວລາການຕອບກັບຂອງສະມາຊິກຄະດີທີ່ຍື່ນໃໝ່ອີກຄັ້ງຈະຂະຫຍາຍເວລາເປັນ 15 ວັນນັບຈາກວັນທີທີ່ຜູ້ດູແລຂໍ້ຕົກລົງສົ່ງຈົດໝາຍແຈ້ງຂໍ້ຕົກລົງອີກຄັ້ງ.

ຖ້າທ່ານໄດ້ຍື່ນໜັງສືຮ້ອງຂໍການຄັດຄ້ານ, ທ່ານຍັງສາມາດປະກົດຢູ່ໃນສໍານວນການພິຈາລະນາອະນຸມັດຂັ້ນສຸດທ້າຍທີ່ກໍານົດໄວ້ສໍາລັບ 16 ກຸມພາ 2023, ເວລາ 2:00 ໂມງແລງ. ໃນຫ້ອງການສານໝາຍເລກ 6 ຊັ້ນທີ 2 ຂອງ Ronald V. ອາຄານລັດຖະບານກາງ Dellums ແລະ ຫ້ອງການສານຂອງສາຫະລັດ, 1301 Clay Street, Oakland, California 94612, ແລະ ໄດ້ປຶກສາການຄັດຄ້ານຂອງທ່ານກັບສານແລະ ບຸກຄົນທີ່ສາມ. ການພິຈາລະນາຂັ້ນສຸດທ້າຍອາດຈະສືບຕໍ່ໃນມື້ອື່ນໆ ໂດຍບໍ່ໄດ້ແຈ້ງກ່ອນລ່ວງໜ້າ.

ທ່ານມີສິດທີ່ຈະຮັກສາທະນາຍຄວາມຂອງທ່ານໄວ້, ໂດຍຄ່າໃຊ້ຈ່າຍຂອງທ່ານເອງ, ເພື່ອຍື່ນແຈ້ງການຂອງການຄັດຄ້ານ ຫຼື ທີ່ປະກົດຢູ່ໃນການພິຈາລະນາອະນຸມັດຂັ້ນສຸດທ້າຍໃນນາມຕົວທ່ານເອງ.

**ຖ້າວ່າສານອະນຸມັດການແກ້ໄຂເຖິງວ່າຈະມີການຄັດຄ້ານກໍຕາມ, ແລະ ທ່ານບໍ່ສາມາດຍົກເລີກການແກ້ໄຂໄດ້, ທ່ານຈະໄດ້ຮັບໃບບິນໃຫ້ຈ່າຍຄ່າດໍາເນີນການສໍາລັບບຸກຄົນ ແລະ ຈະຖືກຜູກມັດດ້ວຍເງື່ອນໄຂຂອງຂໍ້ຕົກລົງ (ລວມເຖິງການຮຽກຮ້ອງສິດທີ່ກ່ຽວຂ້ອງທີ່ອະທິບາຍໄດ້ຂ້າງເທິງນັ້ນ).**

**ທ່ານບໍ່ສາມາດຄັດຄ້ານ ແລະ ຍົກເລີກໄດ້. ຖ້າທ່ານຍື່ນຄໍາຮ້ອງຂໍສອງເລື່ອງ ເພື່ອຂໍຍົກເວັ້ນ ແລະ ແຈ້ງການຂອງການຄັດຄ້ານ, ແຈ້ງການຂອງການຄັດຄ້ານຈະຖືວ່າຖືກຕ້ອງ, ໃນຂະນະທີ່ຄໍາຮ້ອງຂໍການຍົກເວັ້ນຈະເປັນໂມຄະ.**

## ຂ້າພະເຈົ້າສາມາດເອົາຂໍ້ມູນເພີ່ມເຕີມໄດ້ຢູ່ໃສ?

ແຈ້ງການນີ້ແມ່ນການສັງລວມການດໍາເນີນຄະດີທີ່ຖືກນໍາສະເໜີ ແລະ ຂໍ້ກໍານົດຂອງມັນເທົ່ານັ້ນ. ເງື່ອນໄຂ ແລະ ຂໍ້ກໍານົດທີ່ຊັດເຈນຂອງການດໍາເນີນຄະດີ, ລວມທັງ ຄ່າໃຊ້ຈ່າຍໃນການເປັນທີ່ປຶກສາຂອງການດໍາເນີນຄະດີ (ຊຶ່ງຈະຖືກຍື່ນ ແລະ ສົ່ງໃຫ້ທ່ານເພື່ອກວດຄືນບໍ່ໃຫ້ກາຍວັນທີ 5 ຕຸລາ 2022 ~~[insert date forty (40) days prior to deadline to object~~]), ສາມາດກວດສອບທາງອອນລາຍໄດ້ທີ່ www.Louangamathsettlement.com, ໂດຍການຕິດຕໍ່ຫາທີ່ປຶກສາຄະດີຕາມທີ່ຢູ່ຂ້າງລຸ່ມນີ້ ຫຼື ໝາຍເລກໂທລະສັບ, ໂດຍເຂົ້າໄປທີ່ເອກະສານຂອງສານໃນເຄສນີ້, ໂດຍບໍ່ມີຄ່າໃຊ້ຈ່າຍ, ຜ່ານລະບົບການເຂົ້າເຖິງຂອງສາທາລະນະເພື່ອເບິ່ງບັນທຶກທາງອີເລັກໂຕຣນິກຂອງສານ (PACER, Public Access to Court Electronic Records) ທີ່ https://ecf.cand.uscourts.gov, ຫຼື ໂດຍການເຂົ້າໄປຫ້ອງການຂອງທະບຽນສານໄດ້ທີ່ Ronald V. Dellums Federal Building ແລະ United States Courthouse, 1301 Clay Street, Oakland, California 94612, ໃນລະຫວ່າງ 9:00 ໂມງເຊົ້າ ຫາ 4:00 ໂມງແລງ., ວັນຈັນ ຫາ ວັນສຸກ, ຍົກເວັ້ນ ວັນພັກທາງລັດຖະການຂອງສານ

ຖ້າທ່ານມີຄໍາຖາມເພີ່ມເຕີມກ່ຽວກັບເຄສ ຫຼື ການດໍາເນີນການນີ້, ທ່ານສາມາດໂທຫາທີ່ປຶກສາຄະດີ, ສໍາລັບຂໍ້ມູນຂອງຜູ້ທີ່ຕິດຕໍ່ຫາແມ່ນມີໃຫ້ຂ້າງລຸ່ມນີ້:

David G. Spivak
The Spivak Law Firm
8605 Santa Monica Blvd.
PMB 42554
West Hollywood, CA 90069
ໂທລະສັບ: (213) 725-9094
ແຟັກ: (213) 634-2485

ນອກຈາກຕິດຕໍ່ຫາທີ່ປຶກສາຄະດີ, ທ່ານອາດຕິດຕໍ່ຫາຜູ້ຈັດການຄະດີທີ່ເປີໂທຣບໍ່ເສຍຄ່າໄດ້ທີ່ 1 (888) 846-0324.
ທ່ານຍັງສາມາດກວດສອບສະຖານະຫຼ້າສຸດຂອງເຄສນີ້ ແລະ ການດໍາເນີນການໂດຍການເຂົ້າເບິ່ງເວັບໄຊທ໌ນີ້: www.Louangamathsettlement.com.

ກະລຸນາຢ່າໂທຫາສານ ຫຼື ຫ້ອງການຂອງເຈົ້າໜ້າທີ່ສານເພື່ອຮ້ອງຂໍການດໍາເນີນການນີ້ ຫຼື ຂັ້ນຕອນການຮຽກຮ້ອງສິດ.